# ແຜນການສອນ
## ບົດຮຽນໂຮງຮຽນວັນອາທິດ
## ວັນອາທິດ ທີ 16 ພຶສຈິກາ 2008 (11-16-2008)

---

## <u>ໜ້າທີ່ສຳຄັນຂອງຄຣິສຕຽນ:</u>

**<u>ຂໍ້ພຣະຄັມພີໃນບົດຮຽນ</u>**: (ໂຣມ 13:1-14)

**<u>ບົດຮຽນນີ້ເວົ້າກ່ຽວກັບຫຍັງ?:</u>** ບົດຮຽນນີ້ໄດ້ໃຫ້ຕັ້ງໃຈໃສ່ໃນການສິດສອນຂອງທ່ານໂປໂລ ເຖິງການປະຕິບັດຢ່າງຄົບຖ້ວນຂອງໄພ່ພົນຂອງພຣະເຈົ້າດ້ວຍການຢູ່ໃຕ້ອຳນາດຂອງຜູ້ປົກຄອງ, ໃຫ້ຮັກເພື່ອນບ້ານ ແລະປະຕິບັດຕົນເໝືອນພຣະເຢຊູຄຣິດ.

**<u>ເປັນຫຍັງບົດຮຽນນີ້ຈຶ່ງສຳຄັນ?:</u>** ເພາະມີຄົນຈຳນວນຫລວງຫລາຍ ໃຊ້ຊີວິດຕາມຄວາມປາຖນາຂອງຕົນເອງ ໂດຍບໍ່ໃສ່ໃຈນຳສິ່ງໃດ, ເຂົາໄດ້ປະຕິເສດ ຫລືມີຄວາມຄິດສັ້ນ, ເຂົາຊອກຫາຊ່ອງທາງທີ່ຈະຫລີກເວັ້ນການປົກຄອງ ເຂົາໄດ້ເວົ້າວ່າ "ຂ້ອຍຈະເດີນໄປຕາມທາງຂອງຂ້ອຍເອງ ຫລືບໍ່ມີທາງທີ່ຈະເຮັດຕາມທາງຂອງຄົນອື່ນ" ເຂົາບໍ່ຮູ້ວ່າຜູ້ປົກຄອງນັ້ນເປັນຜູ້ທີ່ພຣະເຈົ້າໄດ້ຊົງແຕ່ງຕັ້ງຂຶ້ນມາ. ໃຫ້ຍຶດໝັ້ນ ແລະສັດທາໃນອົງພຣະຄຣິດຈົນກວ່າພຣະອົງສະເດັດກັບມາ.

**<u>ບົດຮຽນນີ້ສາມາດມີຜົນສະທ້ອນຕໍ່ຊີວິດຂອງທ່ານຢ່າງໃດ?:</u>** ບົດຮຽນນີ້ທ້າທາຍທ່ານໃຫ້ຝຶກຝົນການປະຕິບັດຕາມຄຳສອນຂອງອົງພຣະເຢຊູຄຣິດ ໂດຍການຍອມຢູ່ໃຕ້ບັງຄັບບັນຊາຂອງຜູ້ມີອຳນາດການປົກຄອງ ແລະໃຫ້ຮັກເພື່ອນບ້ານ ແລະໃຫ້ຫລີກເວັ້ນຈາກການກະທຳທີ່ບໍ່ດີແກ່ເພື່ອນບ້ານ ໂດຍການມອບທຸກສິ່ງໄວ້ກັບອົງພຣະຄຣິດ.

**<u>ການຈັດຕຽມ ແລະແຜນການສອນຂອງຄຣູ:</u>**

1. ອະທິຖານຂໍການຊົງນຳຈາກພຣະວິນຍານບໍຣິສຸດ ກ່ອນສິ່ງອື່ນໝົດ.
2. ສຶກສາຂໍ້ພຣະຄັມພີທີ່ຈະໃຊ້ໃນບົດຮຽນນີ້.
3. ຖາມລື້ມຄວາມຊົງຈຳຂອງນັກຮຽນໃນບົດຮຽນອາທິດແລ້ວນີ້.
4. ອ່ານ ແຜນການສອນ ໝາຍບ່ອນສຳຄັນ, ປັບປຸງ, ແກ້ໄຂ, ຈົດບັນທຶກ ແລະ ອື່ນໆ……..
5. ແຈກຢາຍບົດຮຽນໃຫ້ນັກຮຽນທຸກຄົນ

**<u>ແນະນຳ</u>**: ເຊື່ອ ແລະເດີນຕາມ. ສົນທະນາເພື່ອໃຫ້ເກີດຄວາມຄິດເຫັນທາງອອກວ່າພວກເຮົາໄດ້ເຊື່ອຖືຫຍັງ.

- ຂຽນ **"ເພາະວ່າຂ້ອຍໄດ້ບອກແລ້ວ"** ຖາມ ພໍ່ແມ່ຂອງທ່ານເຄີຍໄດ້ເວົ້າຢ່າງນີ້ກັບທ່ານບໍ່? ແລະທ່ານເດເຄີຍເວົ້າຢ່າງນີ້ກັບລູກ ໆ ຂອງທ່ານບໍ່? ເປັນຫຍັງພໍ່ແມ່ຈຶ່ງເວົ້າວ່າ "ຂ້ອຍໄດ້ບອກແລ້ວ" (ເພາະວ່າພວກເພິ່ນເຂົ້າໃຈບັນຫາດີທຸກຢ່າງ ແລະພວກເພິ່ນກໍມີຄວາມຮູ້ດີ)
- ເປັນຫຍັງພຣະເຈົ້າຈຶ່ງວ່າ "ເຮົາຕັດດັ່ງນີ້ແຫລະ" (ເພາະພຣະເຈົ້າເປັນຜູ້ແຕ່ງຕັ້ງກົດຣະບຽບອັນຖືກຕ້ອງທ່ຽງທັມແກ່ພວກເຮົາ ແລະພຣະອົງເປັນພຣະເຈົ້າຜູ້ປະເສີດ) ປຽບທຽບລະຫວ່າງພຣະເຈົ້າກັບພໍ່ແມ່: ພວກເພິ່ນມີຄວາມເຂົ້າໃຈ ແລະຄວາມຮູ້ ຈຶ່ງສາມາດນຳພາພວກເຮົາໄດ້.

## 1. ຍອມຢູ່ໃຕ້ອຳນາດການປົກຄອງ: (ໂຣມ 13:1-7)

- ຂໍໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານ ພຣະທັມ ໂຣມ 13:1-7
- ແນະນຳນັກຮຽນໃຫ້ເບິ່ງໃນຂໍ້ 1 ຕັ້ງໃຈໃສ່ຄຳທີ່ວ່າ ທຸກຄົນ ແລະ ຕ້ອງ: ໃນທາງໃດທີ່ບັນດາຜູ້ທີ່ເຊື່ອທັງຫລາຍໄດ້ປະຕິເສດທີ່ຈະບໍ່ທຳຕາມກົດລະບຽບການປົກຄອງ ຫລືເຈົ້າໜ້າທີ່ປົກຄອງ? (ຕົວຢ່າງ ການຂັບຣົດເກີນຄວາມໄວທີ່ຕັ້ງໄວ້, ການເສັຽພາສີ ແລະການຖິ້ມຂີ້ເຫຍື້ອ)ຊຶ່ງຊີ້ໃຫ້ເຫັນເຖິງຄຳວ່າ ທຸກ ໆ ຄົນຕ້ອງເອົາໃຫ້ ບໍ່ໃຫ້ຜູ້ໃດຜູ້ນຶ່ງຫລີກເວັ້ນ ຕ້ອງຍອມໃຫ້ຣັຖບານ.
- ທ້າທາຍນັກຮຽນບຕາມການຮຽກຮ້ອງຂອງຂໍ້ພຣະທັມໃນເມື່ອປະຊາຊົນເຫລື້ອມໃສສັດທາຍອມຢູ່ໃຕ້ເຈົ້າໜ້າທີ່ອຳນາດການປົກຄອງໃນທຸກກໍຣະນີ ທັງການມີຄວາມສະດວກຫລືບໍ່ມີກໍຕາມ, ແລະຖ້າຜູ້ປົກຄອງນັ້ນບໍ່ໄດ້ໃຫ້ການຖວາຍກຽດແດ່ພຣະເຈົ້າກໍຕາມ: (ຕົວຢ່າງ ໂຢເຊບ ແລະ ມາຣີອາທີ່ເດີນທາງໄປຈົດທະບຽນ, ການທີ່ພຣະເຢຊູເສັຽຊ່ວຍສຳລັບພຣະວິຫານ). ຈົ່ງພິຈາຣະນາເບິ່ງພວກທີ່ບໍ່ເຊື່ອໃນເຣື່ອງຄວາມຈິງໃຈຂອງເຂົາທີ່ມີຕໍ່ພວກເຮົາຜູ້ທີ່ເຊື່ອໃນເມື່ອພວກເຮົາຫາກບໍ່ໂຄຣົບອຳນາດການປົກຄອງແລ້ວຈະເປັນແນວໃດ.
- ເວົ້າເຖິງຄຳສັ່ງໃຫ້ເສັຽພາສີ ແລະການເກັບຄ່າທຳນຽມໃນໂຣມ 13:7 ນັ້ນຊີ້ໃຫ້ພວກເຮົາເຫັນວ່າເປັນສິ່ງທີ່ຈຳເປັນຕ້ອງທຳຕາມ ພວກເຮົາຕ້ອງນັບຖື ແລະໃຫ້ກຽດຕໍ່ສິ່ງເຫລົ່ານັ້ນ.

## ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະຄັມພີ: (ໂຣມ 13:1-7)

1. ຜົນທີ່ໄດ້ຮັບຈາກການທີ່ບໍ່ປະຕິບັດຕາມອຳນາດການປົກຄອງນັ້ນເປັນແນວໃດ? (ຝ່າຝືນການຂັບຣົດ ຖືກນຳຂຶ້ນສານ ແລະອື່ນ ໆ)
2. ຄວາມຈິງໃນຕາມພຣະທັມໄດ້ກ່າວໄວ້,ມີສິ່ງໃດແດ່ທີ່ບໍ່ໃຫ້ໂຄຣົບນັບຖືອຳນາດການປົກຄອງ? ແມ່ນຫຍັງທີ່ເປັນຜົນສະທ້ອນກັບຂອງການຕໍ່ຕ້ານ?
3. ໃນພຣະທັມກິຈການ 16:25-34, ທ່ານໂປໂລໄດ້ເຊື່ອຟັງອຳນາດການປົກຄອງ ຍອມໃຫ້ທຸກສິ່ງປ່ຽນແປງໃນຕົວຂອງລາວຢ່າງໃດ?

## 2. ໃຫ້ຮັກເພື່ອນບ້ານ: (ໂຣມ 13:8-10)

- ໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານ ພຣະທັມ ໂຣມ 13:8-10
- ເພື່ອໃຫ້ຈະແຈ້ງໃນຄຳວ່າ ການຕິດໜີ້ທີ່ໃຊ້ກັນ, ເອົາໃຈໃສ່ໃນຄວາມຮັກ,ບໍ່ແມ່ການຢືມ. ເຮັດແນວໃດພວກເຮົາຈະສາມາດ ແລະສົມຄວນເປັນ"ໜີ້"ເພື່ອເປັນການຮັກຊຶ່ງກັນ ແລະກັນ. (ພວກເຮົາບໍ່ສາມາດ "ຈ່າຍຄືນໄດ້" ຄື ຄວາມຮັກຂອງພຣະເຈົ້າທີ່ໄດ້ຊົງໃຫ້ພວກເຮົາ, ແຕ່ພວກເຮົາຕ້ອງພຍາຍາມໃຫ້ຄວາມຮັກຂອງພຣະອົງດ້ວຍການຮັກຊຶ່ງກັນ ແລະກັນໄດ້.) ສຸດທ້າຍຂໍໃຫ້ຜູ້ນຶ່ງອ່ານພຣະທັມ 1 ໂຢຮັນ5:2-3 ແລະສົນທະນາວ່າຈະເຮັດແນວໃດຈະໃຫ້ຄວາມຮັກທີ່ພຣະເຈົ້າໃຫ້ແກ່ພວກເຮົາໄດ້ຖ່າຍທອດໃຫ້ຊຶ່ງກັນ ແລະກັນ.
- ຄວາມຮັກຈະຕ້ອງມີການປະຕິບັດ, ບໍ່ແມ່ນຄວາມຮູ້ສຶກ.
- ຂໍໃຫ້ນັກຮຽນອ່ານພຣະທັມ ໂຢຮັນ 13:34-35ແລ້ວຖາມວ່າ: ເຮັດແນວໃດຄວາມຮັກຂອງພວກເຮົາທີ່ມີຕໍ່ພຣະເຈົ້າຈະເກີດຜົນ, ພວກເຮົາຈະຮັກຊຶ່ງກັນ ແລະກັນຢ່າງໃດ? ໃຫ້ນັກຮຽນທຳຕາມຢ່າງນີ້ໃຫ້ສຳເຣັດ: ພວກເຮົາຮຽກຮ້ອງຫາຄວາມຮັກທັ້ງ ໆ ທີ່....(ຄຳຕອບອາດຮວມທັງ "ພວກເຮົາເຈັບປວດ" "ເຂົາເຈົ້າເປັນຄົນເວົ້າຍາກ ຫລືເປັນຕາຊັງທີ່ສຸດ" "ພວກເຮົາໄດ້ຄອບຄອງມາກ່ອນແລ້ວ ແລະຫລາຍ ໆ ຄົນກໍເຊັ່ນດຽວກັນ..)

- ໃຫ້ນັກຮຽນຄົ້ນຄິດເຣື່ອງຄວາມສັມພັນໃນການດໍາຣົງຊີວິດຂຶ້ນມາຢ່າງນຶ່ງ ວ່າເຂົາເຈົ້າໄດ້ພົບຄວາມຫຍຸ້ງຍາກໃນການໃຫ້ຄວາມຮັກ. ໃຫ້ອີກຜູ້ນຶ່ງອ່ານພຣະທັມ 1 ໂກຣິນໂທ 13:4-8. ໃຫ້ຢຸດຢູ່ທີ່ (“ຄວາມຮັກກໍອົດທົນດົນນານ“)ທຸກປໂຍກ ຢຸດແຕ່ລະເທື່ອ ໃຫ້ມີຜູ້ອາສາສມັກຍົກຕົວຢ່າງວ່າ ເຮັດແນວໃດຈະເຮັດໃຫ້ສອດຄ້ອງກັບລັກສະນະທ່າທາງທີ່ພຣະເຈົ້າໄດ້ຊົງບັນຍັດຄວາມຮັກໄວ້ໃຫ້ມີຄວາມສັມພັນຕໍ່ກັນ.(ຕົວຢ່າງ, “ເປັນຄົນອົດທົນໃຫ້ຫລາຍທີ່ສຸດ, ພວກເຮົາສາມາດຂໍໃຫ້ພຣະເຈົ້າໂຊພວກເຮົາວ່າພຣະອົງຊົງໄດ້ຮັກທຸກຄົນຫລາຍປານໃດ“)

<u>**ຄໍາຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະຄັມພີ:**</u> ໂຣມ 13:8-10

1. ໃນພຣະທັມ 1 ໂຢຮັນ 4:19 ໄດ້ເພີ້ມເຕີມ ຄວາມໝາຍໃນພຣະທັມໂຣມ 13:8-10ຢ່າງໃດ?
2. ພຣະເຈົ້າໄດ້ສໍາແດງຄວາມຮັກຕໍ່ທ່ານແນວໃດ?
3. ຄວາມຮັກຂອງພຣະເຈົ້າໄດ້ປ່ຽນແປງການດໍາຣົງຊີວິດຂອງພວກເຮົາຢູ່ບໍ່ ຖ້າປ່ຽນມີຄວາມຮູ້ສຶກແນວໃດ?

3. <u>***ປະດັບຕົວດ້ວຍພຣະເຢຊູຄຣິດ:***</u> (ໂຣມ 13:11-14)

- ໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານ ພຣະທັມ ໂຣມ 13:11-14
- ໃນຂໍ້ທີ 11 ໄດ້ຊີ້ໃຫ້ເຫັນເຖິງການຮູ້ຈັກເວລາ. ແບ່ງປັນເວລາການໃຊ້ຊີວິດຂອງທ່ານ ໃນເມື່ອທ່ານລືມຫລືເວລາທີ່ທ່ານໄດ້ເຮັດຜິດໃນເຣື່ອງການເລີ້ມຕົ້ນ ຫລືເວລາບໍ່ໄດ້ວາງແຜນໄວ້ກ່ອນ.
- ອະທິບາຍ ເຖິງການສະເດັດກັບມາຂອງພຣະຄຣິດຕາມທີ່ພວກເຮົາຮູ້. (ເຖິງວ່າພວກເຮົາບໍ່ຮູ້ເວລາແນ່ນອນກໍຕາມ) ພວກເຮົາຕ້ອງມີແຜນການສໍາລັບຊີວິດຂອງພວກເຮົາໄວ້ສໍາລັບການສະເດັດມາຂອງພຣະອົງ.
- ຖ້າພວກເຮົາປະດັບຕົວດ້ວຍອົງພຣະເຢຊູຄຣິດເຈົ້າ ໃນຂໍ້ 14, ພວກເຮົາຈະຕ້ອງດໍາເນີນຊີວິດຕາມຢ່າງຂອງພຣະອົງ.

<u>**ຄໍາຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະຄັມພີ:**</u> ໂຣມ 13:11-14

1. ການກະທໍາ ແລະນິສັຍໃຈຄໍແບບໃດທີ່ເປັນການສະແດງໃຫ້ເຫັນແສງສວ່າງ ແລະຄວາມມືດ?ໃນຊ່ວງລະຍະເວລາການດໍາເນີນຊີວິດຂອງທ່ານນັ້ນເວລາໃດທີ່ທ່ານມີຄວາມຮູ້ສຶກວ່າທ່ານໄດ້ຢູ່ໃນຄວາມສວ່າງຢ່າງເຕັມປ່ຽມ?
2. ທ່ານຄິດວ່າແນວໃດບາງສິ່ງທີ່ເປັນ “ຄວາມມືດ“ ໃນຂໍ້ທີ່ 13ນັ້ນ?

<u>**ພຣະຄັມພີແຫ່ງຄວາມຈິງ**</u>

- ຜູ້ທີ່ເຊື່ອທັງຫລາຍຕ້ອງຍອມຢູ່ໃນຂອບເຂດ ແລະເປັນຕົວແທນຂອງຜູ້ທີ່ພຣະເຈົ້າຊົງແຕ່ງຕັ້ງ.
- ຮັກເພື່ອນບ້ານເໝືອນຮັກຕົນເອງ ຢ່າງບໍ່ຄໍານຶງວ່າເຂົາເປັນຄຣິສຕຽນ ຫລືບໍ່ ໃນຖານະທີ່ເຂົາເປັນຜູ້ນໍາໃນທໍານອງດຽວກັນກັບເຮົານັບຖືກົດບັນຍັດຂອງພຣະເຈົ້າ.
- ການຮູ້ຈັກຄວາມສໍາຄັນຂອງພຣະເຢຊູຄຣິດທີ່ຈະສະເດັດກັບມານັ້ນເປັນການດີທີ່ສຸດສໍາລັບຄຣິສຕຽນ.